# ບົດຮຽນທີ 9: ຄວາມບາບ, ຂ່າວປະເສີດ ແລະ ກົດບັນຍັດ

## ຂໍ້ຄວນຈຳ

*ຂ້ານ້ອຍຈະບໍ່ລືມຂໍ້ບັນຍັດຂອງພຣະອົງເລີຍ ເພາະພຣະອົງໄດ້ປະທານຊີວິດ ໃຫ້ຂ້ານ້ອຍດ້ວຍຂໍ້ບັນຍັດເຫຼົ່ານັ້ນ. ຂ້ານ້ອຍເປັນຂອງພຣະອົງ ຂໍໂຜດຊ່ວຍຂ້ານ້ອຍໃຫ້ ພົ້ນ ເພາະຂ້ານ້ອຍໄດ້ສະແຫວງຫາຂໍ້ບັນຍັດຂອງພຣະອົງ" (ພສສ 119:93, 94, NKJV).*

1. ໃນຍຸກປັດຈຸບັນທີ່ມີສື່ສັງຄົມອອນລາຍ ແລະ ຄວາມວຸ່ນວາຍຮອບຕົວ, ທ່ານຄິດວ່າ ສິ່ງລໍ້ລວງ ແບບໃດທີ່ຊາຕານມັກນຳມາໃຊ້ຫຼາຍທີ່ສຸດ ເພື່ອດຶງຄວາມສົນໃຈຂອງເຮົາອອກຈາກພຣະເຈົ້າ? ແລະ ຍ້ອນຫຍັງ ຄົນທີ່ຄິດວ່າຕົນເອງ ເຂັ້ມແຂງແລ້ວ ຈຶ່ງມັກຈະຕົກເປັນເຫຍື່ອຂອງການລໍ້ລວງໄດ້ງ່າຍກວ່າຄົນອື່ນ? 1 ໂຢຮັນ 1:9; 1 ໂກຣິນໂທ 10:12
2. ພຣະຄຳພີປຽບທຽບຊາຕານຄືກັບ ສິງໂຕຄຳລາມ ທີ່ຄອຍຫາໂອກາດໂຈມຕີພວກເຮົາ (1 ເປໂຕ 5:8). ໃນຊີວິດຈິງຂອງທ່ານ, ທ່ານເຄີຍຮູ້ສຶກວ່າ ຖືກມັນໂຈມຕີໃນຮູບແບບໃດແດ່? (ເຊັ່ນ: ຄວາມຄິດດ້ານລົບ, ຄວາມຢ້ານ, ຫຼື ບັນຫາໃນຄອບຄົວ) ແລະ ຍ້ອນຫຍັງ ການອະທິຖານຈຶ່ງເປັນອາວຸດທີ່ຊ່ວຍປ້ອງກັນພວກເຮົາໄດ້ດີທີ່ສຸດ?
3. ຊາຕານໃຊ້ຈຸດອ່ອນຂອງແຊມຊັນ ເພື່ອທຳລາຍຊີວິດຂອງລາວ, ທ່ານຄິດວ່າ ສິ່ງໃດທີ່ຊາຕານ ໃຊ້ເພື່ອຜູກມັດ ແລະ ຄວບຄຸມຄົນໃນປັດຈຸບັນທີ່ໜ້າຢ້ານທີ່ສຸດ? ແລະ ຍ້ອນຫຍັງ ທ່ານຈຶ່ງຕ້ອງເພິ່ງພາລິດເດດຂອງພຣະເຈົ້າເພື່ອທຳລາຍມັນ? ຜູ້ປົກຄອງ ບົດທີ 14-16, 2 ໂກຣິນໂທ 10:4)